ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສະຖານທູດແຫ່ງ ສາທາລະນະລັດ ຝຣັ່ງ ປະຈຳ ສປປ ລາວ ໄດ້ຈັດພິທີປະດັບຫຼຽນກາກຽດຕິຄຸນ ແຫ່ງຊາດຝຣັ່ງ ໃຫ້ແກ່ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ



ໃນວັນທີ 15 ກັນຍາ 2021, ເວລາ 17:30 ໂມງ ທີ່ ເຮືອນພັກ ທ່ານເອກອັກຄະລັດຖະວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ຝຣັ່ງ ປະຈຳ ສປປ ລາວ, ທ່ານ ນ. Florence Jeanblanc-Risler, ເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມແຫ່ງ ສາທາລະນະລັດ ຝຣັ່ງ ປະຈຳ ສປປ ລາວ, ໂດຍຕາງໜ້າໃຫ້ແກ່ ລັດຖະບານ ສາທາລະນະ ລັດ ຝຣັ່ງ, ໄດ້ຈັດພິທີ ແລະ ປະດັບຫຼຽນກາກຽດຕິຄຸນແຫ່ງຊາດຝຣັ່ງ ຂັ້ນ Chevalier (“Chevalier de l’ordre national du Mérite” French décorations) ໃຫ້ແກ່ ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທະນາ ຄານ ແຫ່ງ ສປປ ລາວ.







ອີງຕາມ ລັດຖະດຳລັດ ສະບັບລົງວັນທີ 09 ສິງຫາ 2019 ຂອງ ພະນະທ່ານປະທານາທິບໍດີແຫ່ງ ສາທາລະນະລັດ ຝຣັ່ງ ໄດ້ຕົກລົງເຫັນດີປະດັບຫຼຽນກາກຽດຕິຄຸນແຫ່ງຊາດຝຣັ່ງ ຂັ້ນ Chevalier (“Chevalier de l’ordre national du Mérite” French décoration) ໃຫ້ແກ່ ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນວຽກງານການພັດທະນາຂະແໜງການເງິນຂອງລາວໃນຊ່ວງໄລຍະການຫັນຈາກເສດຖະກິດທີ່ວາງແຜນໄປສູ່ກົນໄກຕະຫຼາດ, ການສ້າງຕັ້ງຕະຫຼາດທຶນ, ການພັດທະນາຕະຫຼາດເງິນ, ນະໂຍບາຍສິນເຊື່ອ, ນະໂຍບາຍການເງິນ, ສະຖຽລະພາບທາງດ້ານການເງິນ, ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ລວມທັງວຽກງານການຮ່ວມມືສາກົນ ອື່ນໆ.

ຫຼຽນດັ່ງກ່າວ ຖືເປັນຫຼຽນທີ່ມີຄຸນຄ່າ ແລະ ເປັນຫຼຽນທີ່ສະແດງໃຫ້ເຫັນເຖິງການພົວພັນຮ່ວມມືທີ່ດີຂອງສອງລັດຖະບານ ສປປ ລາວ ແລະ ສາທາລະນະລັດ ຝຣັ່ງ ທີ່ມີສາຍພົວພັນການທູດ ຄົບຮອບ 70 ປີ (31 ມັງກອນ 1951 - 31 ມັງກອນ 2021), ທັງເປັນສິ່ງຢັ້ງຢືນເຖິງຄວາມເອົາໃຈໃສ່ຂອງສອງຝ່າຍ ກໍ່ຄື ທະນາຄານ ແຫ່ງ ສປປ ລາວ ແລະ ສະຖານທູດ ແຫ່ງ ສາທາລະນະລັດ ຝຣັ່ງ ປະຈຳ ສປປ ລາວ ໃນວຽກການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ອັນເປັນຜົນຊ່ວຍໃຫ້ ສປປ ລາວ ສາມາດຫຼຸດພົ້ນອອກຈາກບັນຊີສີເທົາຂອງ ອົງການ FATF ໄດ້ໃນເດືອນ ມິຖຸນາ ປີ 2017 ແລະ ຖອນລາຍຊື່ ສປປ ລາວ ອອກຈາກບັນບັນຊີເຝົ້າລະວັງກ່ຽວກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ອີຢູ ໃນປີ 2019.

ໂດຍ: ກົມຮ່ວມມືສາກົນ

**ຢູ່ເມືອງລາວ ໃຊ້ແຕ່ເງິນກີບ**